**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງຫົວພັນ

ພະແນກກະສິກຳ ແລະ ສິ່ງແວດລ້ອມ

ເລກທີ: 0491 /ກສຂ

ຫົວພັນ, ວັນທີ: 22 / 7 /2026

# ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາຈັດຊື້ສິນຄ້າ

ເລື່ອງ: ເຂົ້າຮ່ວມການປະມູນແບບສົມທຽບລາຄາ ຈັດຊື້ -ຈັດຈ້າງອຸປະກອນ ແລະ ແນວພັນສິ່ງເສີມການລ້ຽງກົບ ແລະ ສິ່ງເສີມການລ້ຽງປາ ຜະລິດເປັນສິນຄ້າໃຫ້ສະມາຊິກບ້ານເປົ້າໝາຍ ເມືອງວຽງໄຊ

- ອີງຕາມ ສັນຍາເງິນກູ້ລະຫວ່າງລັດຖະບານ ສປປ ລາວ ແລະ ທະນາຄານພັດທະນາ ອາຊີ (ADB)ເລກທີ ADB Loan No.3817-Lao (COL),ເງິນຊ່ວຍເຫຼືອລ້າ ເລກທີ ADB Grant No.0659-Lao (SF),EU Grant No.0660-Lao (EF ລົງວັນທີ 30 ຕຸລາ 2019, ເງິນຊ່ວຍເຫຼືອລ້າ ເລກທີ GAFSP Grant No.0912-Lao (EF), ລົງວັນທີ 12 ທັນວາ 2023.
- ອີ່ງຕາມ ຂໍ້ຕົກລົງອະນຸມັດດຳເນີນການປະມູນສົມທຽບລາຄາຈັດຊື້ອຸປະກອນ ແລະ ແນວພັນສິ່ງເສີມການລ້ຽງກົບ ແລະ ສິ່ງເສີມການລ້ຽງປາ ຜະລິດເປັນສິນຄ້າ ໃຫ້ສະມາຊິກບ້ານເປົ້າໝາຍ ເມືອງວຽງໄຊ ສະບັບເລກທີ່ 1500 /ກສຂ,ລົງວັນທີ 22 ກໍລະກົດ 2026

1. ມີຈຸດປະສົງນຳໃຊ້ສ່ວນໜຶ່ງຂອງທຶນ ເພື່ອດຳເນີນການຈັດຊື້ສິນຄ້າ ອຸປະກອນ ແລະ ແນວພັນສິ່ງເສີມການລ້ຽງກົບ ແລະ ສິ່ງເສີມການລ້ຽງປາ ຜະລິດເປັນສິນຄ້າ ດ້ວຍການປະມູນສົມທຽບລາຄາ(Shopping).
2. ພະແນກກະສິກຳ ແລະ ສິ່ງແວດລ້ອມ ຫ້ອງການປະສານງານໂຄງການພັດທະນາພື້ນຖານໂຄງລ່າງຊົນນະບົດ ແລະ ການຄຸ້ມຄອງອ່າງໂຕ່ງແບບຍືນຍົງ (ພຊຄ) ແຂວງຫົວພັນ ຂໍເຊີນບໍລິສັດ/ຫ້າງຮ້ານ ເຂົ້າຍື່ນຊອງປະມູນສົມທຽບລາຄາສຳລັບການຈັດຊື້ສິນຄ້າ ອຸປະກອນ ແລະ ແນວພັນສິ່ງເສີມການລ້ຽງກົບ ແລະ ສິ່ງເສີມການລ້ຽງປາ ຜະລິດເປັນສິນຄ້າ ໄລຍະເວລາໃນການຈັດສົ່ງແມ່ນ 30 ວັນ.
3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

4. ບໍລິສັດ ຫຼື ຮ້ານທີ່ຈະເຂົ້າຮ່ວມປະມູນຕ້ອງປະກອບບັນດາເອກະສານດັ່ງລຸ່ມນີ້:

- ຊື່ທີ່ຖືກຕ້ອງຕາມກົດໝາຍຂອງຜູ້ປະມູນ, ທີ່ຢູ່ທາງການ.
- ສຳເນົາໃບທະບຽນວິສາຫະກິດ
- ໜັງສືອະນຸຍາດດຳເນີນທຸລະກິດ ຫຼື ເອກະສານຢັ້ງຢືນການຕໍ່ໜັງສືອານຸຍາດດຳເນີນທຸລະກິດ ປີ 2026
- ມີໃບຢັ້ງຢືນການເສຍອາກອນ ປີ 2025
- ຫນັງສືມອບສິດໃນການເຊັນເອກະສານປະມູນສະບັບຕົ້ນ, ຖ້າຫາກມີ.
- ມີປະສົບການໃນການສະໜອງສິນຄ້າປະເພດດັ່ງກ່າວຢ່າງໜ້ອຍ 2 ປີ.

5. ເປີດຮັບເອກະສານເລີ່ມແຕ່ ວັນທີ 24 ກໍລະກົດ 25 ສິງຫາ 2026

6. ຊອງປະມູນຕ້ອງສົ່ງກ່ອນເວລາ 14 ໂມງ 00 ນາທີ ວັນທີ 25 ສິງຫາ 2026 ທີ່ ຫ້ອງການປະສານງານໂຄງການພັດທະນາພື້ນຖານໂຄງລ່າງຊົນນະບົດ ແລະ ການຄຸ້ມຄອງອ່າງໂຕ່ງແບບຍືນຍົງ (ພຊຄ) ແລະ ຊອງປະມູນສົມທຽບລາຄາທຸກໆຊອງຈະໄດ້ເປີດໃນເວລາ 14 ໂມງ 00 ນາທີ ຂອງວັນດຽວກັນໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈຕ້ອງການເຂົ້າຮ່ວມ.

7. ສຳລັບຂໍ້ມູນລາຍລະອຽດເພີ່ມເຕີມສາມາດຕິດຕໍ່ພົວພັນໄດ້ທີ່ຫ້ອງການປະສານງານໂຄງການໂດຍກົງໃນໂມງລັດຖະການຕາມທີ່ຢູ່ລຸ່ມນີ້:

ພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງຫົວພັນ, ຫ້ອງການປະສານງານໂຄງການພັດທະນາພື້ນຖານໂຄງລ່າງຊົນນະບົດ ແລະ ການຄຸ້ມຄອງອ່າງໂຕ່ງແບບຍືນຍົງ (ພຊຄ)
ຂະແໜງຊົນລະປະທານ.ຊັ້ນ 2 ເບີຫ້ອງ 01
ທີ່ຢູ່: ຖະໜົນໜອງຄ້າງ, ບ້ານ ຫາດເມືອງ, ເມືອງ ຊຳເໜືອ, ແຂວງຫົວພັນ
ເບີໂທຕິດຕໍ່: **020 5895 5456**; E-mail: chitsoukjalern@gmail.com ຜູ້ປະສານງານໂຄງການ
**020 5942 2945** ; E-mail: thomsou licntham@gmail.com ນາງ ທຸມມີ (ຜູ້ຊ່ວຍຈັດຊື້ຈັດຈ້າງ)

**ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ**

ພະແນກ ກະສິກຳ ແລະ ສິ່ງແວດລ້ອມ ແຂວງຫົວພັນ

ແກ້ວປະສິດ ມົກມະນີວົງ